ໂຣມກະວີ

# ດາວປະດັບດິນ



ໂດຍ: ຮຸ່ງອະລຸນ ແດນວິໄລ

ໂຣມບິດກະວີ

# ດາວປະດັບດິນ

ຮຸ່ງອະລຸນ ແດນວິໄລ

30-06-2007

ຈັດພິມໂດຍ

ວັນນະສິນ

2007

ໂຮມບົດກະວີ: ດາວປະດັບດິນ

ໂດຍ: ຮຸ່ງອະລຸນ ແດນວິໄລ

© ສະຫງວນລິຂະສິດ

ຈັດພິມໂດຍ
ວັນນະສິນ

ພິມຄັ້ງທີຫນຶ່ງ ປີ 2007
ຈຳນວນພິມ 1000 ຫົວ
ທະບຽນພິມ 113 ພຈ 27042006
ພິມທີ່ ໂຮງພິມແຫ່ງລັດ

# ຄຳນຳ

"ດາວປະດັບດິນ" ເປັນໂຮມບົດກະວີອີກຊຸດໜຶ່ງ ຂອງຣຸ່ງອະລຸນ ແດນວິໄລ ທີ່ສຳນັກພິມວັນນະສິນຢາກນຳສະເໜີ ເພື່ອໃຫ້ທ່ານຜູ້ອ່ານ ໄດ້ສຳຜັດກັບວາດກະວີ ທີ່ແປກໃໝ່ ເຊິ່ງເກີດຈາກຄວາມພະຍາຍາມ ຂອງ ນັກກະວີທ່ານນີ້.

ສຳນັກພິມວັນນະສິນ ຈະບໍ່ຂໍກ່າວຫຍັງຫລາຍກ່ຽວກັບບົດກະວີຊຸດນີ້ ຈະຂໍປ່ອຍໂອກາດໃຫ້ທ່ານຜູ້ອ່ານມີອິດສະຫລະ ໃນການຕີລາຄາດ້ວຍຕົນເອງ ຫາກວ່າມີຄວາມຄິດເຫັນແນວໃດ ຢ່າລືມສົ່ງຂ່າວເຖິງສຳນັກພິມວັນນະສິນດ້ວຍ.

*ສຳນັກພິມວັນນະສິນ*

*ກະຊວງການແຖລງຂ່າວ ແລະ ວັດທະນະທຳ*

# ຈາກໃຈຜູ້ຂຽນ

ແນມເບິ່ງຟ້າ ດາວດາດຫລາຍດວງ
ດວງໃດເດ ໜ່າຍດວງໃດແທ້
ດວງໃດນັ້ນ ແພງດວງໃດແດ່
ສັງວາໃສສ່ອງແຍ້ມ ໂດຍດ້າມດັ່ງດຽວ

ດາວບໍ່ໄດ້ ຫວງສິ່ງຕົນມີ
ມີແສງໃສ ສ່ອງໃນແດນຟ້າ
ມີແສງຕ້ອນ ປັນດາວດວງອື່ນ
ຕາມທີ່ມີມອບໃຫ້ ເຖິງແທ້ທົ່ວກັນ

ດາວຈຶ່ງແຈ້ງ ຮຽງຮ່ວມເວຫາ
ທາໃດປານ ປຽບແດນດາວໄດ້
ທາໃດໃຫ້ ຄວາມງາມໂດຍດັ່ງ
ຍາມເມື່ອດາວເດັ່ນຟ້າ ແສງແຍ້ມໃສ່ກັນ

ຄົນດັ່ງດ້າມ ດາວຢູ່ແດນດິນ
ດິນໃດເດ ຮຸ່ງເຮືອງໃສແຈ້ງ
ດິນໃດກ້າວ ທັງມວນຊົມຊື່ນ
ກໍ່ເພາະຄົນໂອບອ້ອມ ໃຈເອື້ອຕໍ່ກັນ ທັ້ນແລ້ວ

# ສາລະບານ


| | | |
|---|---|---|
| ❁ | ຄຳນຳ | 1 |
| ❁ | ຈາກໃຈຜູ້ຂຽນ | 2 |
| 1 | ດິນນີ້ເຮົາຢູ່ | 3 |
| 2 | ມັນມາແທນຄວາຍ | 4 |
| 3 | ເອກະລັກຄົນຄ້ານ | 6 |
| 4 | ທາກິນນຳຄວາມຝັນ | 8 |
| 5 | ດ້ວຍວິນຍານ | 10 |
| 6 | ໄຕ້ດາວ | 12 |
| 7 | ຊິມປ່າຊ້າ | 14 |
| 8 | ດາວປະດັບດິນ | 16 |
| 9 | ສາວຊາວນາ | 18 |
| 10 | ເຮືອນຂ້ອຍແຄມນາ | 20 |
| 11 | ສາຍນ້ຳ ແລະ ຫົວໃຈຊາຍ | 22 |
| 12 | ປາກກ້ຽງ ເວົ້າມ່ວນ | 24 |

| | | |
|---|---|---|
| 13 | ຫນຶ່ງໃນເພື່ອນແທ້ | 26 |
| 14 | ເຣັດນາ | 28 |
| 15 | ນາງກາງແດດ | 31 |
| 16 | ນັດພົບຍາມຝົນ | 33 |
| 17 | ລ້ຽງລູກ | 35 |
| 18 | ບິນເສັ້ນທາງຮັກ | 39 |
| 19 | ກຸະຫນົບສາຍຮັກ | 41 |
| 20 | ຄິດດີ ຄິດເສຍ | 43 |
| 21 | ງາມຍ້ອນແຕ່ງ | 45 |
| 22 | ຫົວໃຈຮັກ | 47 |
| 23 | ສາວຜິວດຳ | 49 |
| 24 | ດ້ວຍຮັກ ແລະ ຈິງໃຈ | 51 |
| 25 | ສອງງາມ | 53 |
| 26 | ໃຈບອດ | 54 |
| 27 | ເອົາໃຫ້ ໄດ້ຮັບ | 56 |
| 28 | ເວລາຂອງຊີວິດ | 58 |
| 29 | ຈຸດຢືນ | 60 |
| 30 | ຄວາມຈິງບາງຢ່າງ | 62 |
| 31 | ກ່ອນຈະເຖິງຈຸດຫມາຍ ທີ່ບໍ່ຢາກໄປ | 64 |
| 32 | ຄົນປູກເຂົ້າ | 66 |
| 33 | ຫລາຍຊີວິດ ໃນດິນດຽວ | 68 |
| 34 | ກິນແກງ ໃຫ້ເຈົ້າຊອມດູກ້າງ | 70 |
| 35 | ສັບພະສິ່ງທັງມວນ | 73 |
| ● | ກຽວກັບນັກກະວີ | 75 |

# ດິນນີ້ເຮົາຢູ່

**ດິນ** ກີ່ນນີ້ ເຮົາຢູ່ເຮົາຢືນ
**ນີ້** ແຫລະຄືດິນແດນ ບ່ອນເຮົາເນົາຢັ້ງ
**ເຮົາ** ແປງສ້າງ ຫາກິນລ້ຽງຊີບ
**ຢູ່** ແຜ່ນດິນແຫ່ງນີ້ ມາຕັ້ງແຕ່ດຶກ

**ດິນ** ກີ່ນນີ້ ເປັນແຫລ່ງອາຫານ
**ນີ້** ແຫລະດິນສົມບູນ ຊຸ່ມເຢັນຫາຍຮ້ອນ
**ເຮົາ** ບໍ່ເປັນຄົນຄ້ານ ມີກິນມີຢູ່
**ຢືນ** ໃສ່ສ້າງບ່ອນນັ້ນ ຫມາຍໃຫ້ຮຸ່ງເຮືອງ

# ມັນມາແທນຄວາຍ

24 / VII

**ຊາວ** ນາຮອມບໍ່ຮູ້ ເຖິງຊື່ໂຕຄວາຍ
**ນາ** ບໍ່ເອົາຄວາຍໄຖ ດັ່ງເຄີຍຄືເຄົ້າ
**ຍຸກ** ນີ້ເຂົາບຳໃຊ້ ຍົນຍານໄວວອງ
**ໃໝ່** ດີໄຖຄ່ອງແຄ້ວ ກິນຫຍ້າບໍ່ເປັນ

ຫ້າມຈຳໜ່າຍ

**ລົດ** ຕ້ອກໆວ່າເຊັ່ນ ເປັນຊື່ຂອງມັນ
**ໄຖ** ນາພຽງວັນດຽວ ໄລ່ລວມເລີຍແລ້ວ
**ມາ** ຕ່າງແນວຄວາຍຕູ້ ຄວາຍດຳຄວາຍດ່ອນ
**ແທນ** ບ່ອນຄວາຍອີ່ຕູ່ ເອົາເອີ້ນລົດໄຖ

**ຄວາຍ** ບໍ່ຢືນມໍ່ໄດ້ ນາໄຮ່ເຄີຍໄກ
**ຄ້ຽວ** ເອື້ອງຕາແນມໄປ ເບິ່ງເຂົາໄກຄືນ
**ເຟືອງ** ທີ່ຄົນເອົາໃຫ້ ທັງແຂງຂົວກີນ
**ແຫ້ງ** ແບບກິນຍາກຫຍໍ້າ ຄຸມຄ້ຽວຊ່ອຍກັນ

**ລົດ** ທີ່ມາໃຫມ່ນັ້ນ ມັນບໍ່ສິນໃຈ
**ແຍ່ງ** ວຽກຄວາຍໄປທຳ ສິ່ງສຽງດັງກ້ອງ
**ວຽກ** ຄ່ອງຄວາຍເຄີຍຄ້ຳ ເຄີຍຄູນເຄີຍຊ່ອຍ
**ໄປ** ເປັນວຽກເພີ່ນຈ້ອຍ ຄວາຍຊ້ຳຫວ່າງງານ

**ກີກ** ຄົນພານອິ່ມຮ້າຍ ທັງໄລ່ທັງຕີ
**ໄລ່** ໃຫ້ໜີໂນນກຽງ ຈ່ອງດັງດຶງທິ້ນ
**ຂຶ້ນ** ລົດໄປໄກບ້ານ ໄກນາໄກປ່າ
**ລົດ** ແລ່ນພາຫ່າງຫ້ວຍ ຫນອງນ້ຳບວກຕົມ

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ